**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເລກທີ 226/ຖວທ

ນະຄອນຫຼວງວຽງຈັນ, ວັນທີ 26 ພຶດສະພາ 2023

# ຄຳແນະນຳ

# ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍປ້າຍ

- ອີງຕາມກົດໝາຍວ່າດ້ວຍປ້າຍ ສະບັບເລກທີ 50/ສພຊ, ລົງວັນທີ 21 ມິຖຸນາ 2018;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງ ຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 678/ນຍ, ລົງວັນທີ 21 ທັນວາ2021;
- ອີງຕາມ ໜັງສືສະເໜີ ຂອງກົມວັນນະຄະດີ ແລະ ພິມຈຳໜ່າຍ ສະບັບເລກທີ 361/ວພຈ, ລົງວັນທີ 21 ພະຈິກ 2022.

## ລັດຖະມົນຕີ ອອກຄຳແນະນຳ:

### I. ຈຸດປະສົງ

ຄຳແນະນຳສະບັບນີ້ວາງອອກ ເພື່ອແນະນຳ, ອະທິບາຍ ແລະ ຜັນຂະຫຍາຍ ເນື້ອໃນບາງມາດຕາ ຂອງກົດໝາຍວ່າດ້ວຍປ້າຍ ໃຫ້ລະອຽດ, ຈະແຈ້ງ, ສອດຄ່ອງ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດ.

### II. ແນະນຳເພີ່ມເຕີມບາງເນື້ອໃນ

ແນະນຳການຈັດຕັ້ງປະຕິບັດ ບາງມາດຕາ ຂອງກົດໝາຍວ່າດ້ວຍປ້າຍ ມີດັ່ງລຸ່ມນີ້:

**ມາດຕາ 8 ປະເພດປ້າຍ**

ກົດໝາຍ ແລະ ຄຳແນະນຳສະບັບນີ້ ບໍ່ໄດ້ກຳນົດກວມເອົາ ປ້າຍວິສາຫະກິດ, ປ້າຍຈໍລະຈອນ, ປ້າຍສະຖານທູດ, ປ້າຍ ຂອງອົງການຈັດຕັ້ງສາກົນ, ປ້າຍໂຄສະນາກິດຈະກຳທີ່ພົວພັນກັບສາສະໜາ ແລະ ປ້າຍບົ່ງບອກສະຖານທີ່ທ່ອງທ່ຽວ.

**ມາດຕາ 19 ເງື່ອນໄຂ ຜູ້ດຳເນີນທຸລະກິດກ່ຽວກັບປ້າຍ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ສະເໜີ ຂໍດຳເນີນທຸລະກິດກ່ຽວກັບປ້າຍນອກຈາກເງື່ອນໄຂທີ່ໄດ້ກຳນົດໃນມາດຕາທີ 19 ຂອງກົດໝາຍແລ້ວ ໃຫ້ຜູ້ສະເໜີຂໍດຳເນີນທຸລະກິດຮ່າງກົດລະບຽບການເຄື່ອນໄຫວພາຍໃນ ຂອງຕົນນຳສະເໜີຂະແໜງການຄຸ້ມຄອງວິຊາການພິຈາລະນາເພີ່ມຕື່ມ.

**ມາດຕາ 20 ການຂໍອະນຸຍາດດຳເນີນທຸລະກິດກ່ຽວກັບປ້າຍ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ຂໍອະນຸຍາດດຳເນີນທຸລະກິດກ່ຽວກັບປ້າຍຕ້ອງມີໃບທະບຽນວິສະຫະກິດ ຈາກຂະແໜງອຸດສະຫະກຳ ແລະ ການຄ້າ ແລ້ວຈຶ່ງມາຂໍອະນຸຍາດ ນຳຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

**ມາດຕາ 23 ການຍື່ນຄຳຮ້ອງຂໍອະນຸຍາດອອກປ້າຍ**

ການຍື່ນຄຳຮ້ອງຂໍອະນຸຍາດອອກປ້າຍໂຄສະນາ ເຄື່ອງດື່ມທີ່ມີທາດເຫຼົ້າ, ຢາສູບຕ້ອງໄດ້ຮັບການຢັ້ງຢືນ, ເຫັນດີ ຈາກຂະແໜງສາທາລະນະສຸກ ກ່ອນ ຈຶ່ງສະເໜີຕໍ່ຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເພື່ອອອກໃບອະນຸຍາດການໂຄສະນາດ້ວຍປ້າຍໄດ້.

**ມາດຕາ 26 ຂະໜາດ ແລະ ການຕິດຕັ້ງປ້າຍ**

- ປ້າຍຂ້າມທາງຕ້ອງມີຂະໜາດບໍ່ເກີນ 100 ຊມ ແລະ ທາງຍາວຕາມຄວາມເໝາະສົມກັບທາງກວ້າງ ແລະ ແຄບຂອງທາງ;
- ປ້າຍໂຄສະນາຂອງພັກ-ລັດ ແລະ ເອກະຊົນຢູ່ໃນເຂດຕົວເມືອງກຳນົດຂະໜາດໃຫ່ຍສຸດບໍ່ໃຫ້ເກີນ 400 x 800 ຊັງຕີແມັດ;
- ປ້າຍໂຄສະນາຂອງພັກ-ລັດແລະເອກະຊົນຢູ່ເຂດຊານເມືອງ ຫຼື ນອກເມືອງອອກໄປກຳນົດຂະໜາດໃຫ່ຍສຸດບໍ່ໃຫ້ເກີນ 600 x 1200 ຊັງຕີແມັດ;
- ປ້າຍໜ້າຮ້ານ, ກຳນົດໃຫຍ່ສຸດບໍ່ໃຫ້ເກີນ 300x 600 ຊັງຕີແມັດ;
- ປ້າຍຫ້ອຍເສົາໄຟກຳນົດໃຫຍ່ບໍ່ໃຫ້ເກີນ 60 x 150 ຊັງຕີແມັດ;
- ຂະໜາດປ້າຍວິສາຫະກິດ, ລັດວິສາຫະກິດ ແມ່ນໃຫ້ປະຕິບັດຕາມລະບຽບການສະເພາະຂອງຂະແໜງ ອຸດສາຫະກຳ ແລະ ການຄ້າ;
- ປ້າຍບົ່ງບອກຂອງອົງການຈັດຕັ້ງພັກ-ລັດ ທີ່ໄດ້ຮັບການອຸປະຖຳ ຈາກຫົວໜ່ວຍທຸລະກິດ ບໍ່ໃຫ້ນຳໃຊ້ເຄື່ອງໝາຍສິນຄ້າ (ໂລໂກ) ເຂົ້າໃນປ້າຍ;
- ປ້າຍສຶກສາອົບຮົມ ຂອງ ອົງການຈັດຕັ້ງ ພາກລັດ ທີ່ໄດ້ຮັບການອຸປະຖຳ ຈາກຫົວໜ່ວຍທຸລະກິດທີ່ມີເຄື່ອງໝາຍການຄ້າ (ໂລໂກ) ໃຫ້ຢູ່ລຸ່ມເບື້ອງຊ້າຍ ຫຼື ຂວາຂອງປ້າຍ ມີຂະໜາດບໍ່ເກີນ 1/4ຂອງເນື້ອທີ່ປ້າຍ;
- ສຳລັບຂະໜາດປ້າຍປະເພດ ໂຄສະນາສິນຄ້າ ແລະ ການບໍລິການ, ປ້າຍເຄື່ອນທີ່, ປ້າຍຕິດໃສ່ອາຄານ ແລະ ປ້າຍເອເລັກໂຕຣນິກ ແມ່ນອີງຕາມລະບຽບການ ຂອງ ຂະແໜງໂຍທາທິການ ແລະ ຂົນສົ່ງ.

**ມາດຕາ 28 ກຳນົດເວລານຳໃຊ້ປ້າຍ**

ການກຳນົດເວລານຳໃຊ້ປ້າຍໃຫ້ປະຕິບັດດັ່ງນີ້:

1. ປ້າຍບົ່ງບອກ ສະຖານທີ່ ຂອງ ພາກລັດ ແລະ ເອກະຊົນ ແມ່ນ ນຳໃຊ້ ນັບແຕ່ວັນໄດ້ຮັບອະນຸຍາດຈົນກ່ວາສະຖານທີ່ນັ້ນມີການຍົກຍ້າຍ, ປ່ຽນແປງ, ຮື້ຖອນ ແລະ ຕ້ອງຂໍອະນຸຍາດອອກປ້າຍໃໝ່;
2. ປ້າຍສຶກສາອົບຮົມ, ປ້າຍປຸກລະດົມ, ປ້າຍຄຳຂວັນ, ປ້າຍຂະບວນການ, ຮູບແຕ້ມ, ຮູບຖ່າຍ, ທີ່ມີລັກສະນະຍຸດທະສາດສາມາດນຳໃຊ້ໄດ້ ຕາມແຕ່ລະກໍລະນີ;
3. ປ້າຍໂຄສະນາກ່ຽວກັບຜະລິດຕະພັນສິນຄ້າ ແລະ ການບໍລິການຕ່າງໆມີອາຍຸການນຳໃຊ້ຕາມສັນຍາ ແລະ ສາມາດຕໍ່ສັນຍານຳໃຊ້ໄດ້ (ສັນຍາ ບໍ່ໃຫ້ເກີນສິບສອງເດືອນຕໍ່ຄັ້ງ);
4. ປ້າຍຊົ່ວຄາວ, ປ້າຍຂ້າມທາງທີ່ໂຄສະນາຜະລິດຕະພັນສິນຄ້າ ໃນງານຕ່າງໆ ພາຍຫຼັງສຳເລັດງານແລ້ວແມ່ນໃຫ້ເກັບກູ້ພາຍໃນເຈັດວັນ.

**ມາດຕາ 35 ຂໍ້ຫ້າມທົ່ວໄປ**

ນອກຈາກ ຂໍ້ຫ້າມທີ່ໄດ້ກຳນົດໄວ້ໃນມາດຕາ ນີ້ແລ້ວ ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງນຳໃຊ້ ກາໝາຍຊາດ, ທຸງພັກ, ທຸງຊາດ ທີ່ສະແດງເຖິງການແຕະຕ້ອງ ຄວາມໝັ້ນຄົງ, ຄວາມສະຫງົບຂອງ

ຊາດ, ຄວາມລັບຂອງພັກ-ລັດ, ວັດທະນະທຳອັນດີງາມຂອງຊາດ, ຄວາມສາມັກຄີຂອງ ປະຊາຊົນລາວບັນດາເຜົ່າ.

**ມາດຕາ 45 ສິດແລະໜ້າທີ່ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

ການຂໍອະນຸຍາດດຳເນີນທຸລະກິດກ່ຽວກັບປ້າຍໂຄສະນາ ທີ່ຂຶ້ນທະບຽນວິສາຫະກິດຂັ້ນກະຊວງ ໃຫ້ສະເໜີຕໍ່ກະຊວງຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ;

ຫົວໜ່ວຍທຸລະກິດ ທີ່ຂຶ້ນທະບຽນວິສາຫະກິດ ຂັ້ນພະແນກ, ຂັ້ນເມືອງ ທີ່ມີການໂຄສະນາດ້ວຍປ້າຍ ສອງແຂວງຂຶ້ນໄປໃຫ້ສະເໜີຕໍ່ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

**ມາດຕາ 46 ສິດແລະໜ້າທີ່ຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວຂັ້ນແຂວງ**

ການຂໍອະນຸຍາດດຳເນີນທຸລະກິດກ່ຽວກັບປ້າຍໂຄສະນາທີ່ຂຶ້ນທະບຽນວິສາຫະກິດຂັ້ນພະແນກ ໃຫ້ສະເໜີຕໍ່ພະແນກຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ;

ຫົວໜ່ວຍທຸລະກິດ ທີ່ຂຶ້ນທະບຽນວິສາຫະກິດ ຂັ້ນເມືອງ, ນະຄອນທີ່ມີການໂຄສະນາດ້ວຍປ້າຍ ສອງເມືອງຂຶ້ນໄປ ໃນແຂວງດຽວກັນໃຫ້ສະເໜີຕໍ່ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

ພະແນກ ຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ ຂັ້ນແຂວງ ສາມາດອອກໃບອະນຸຍາດປ້າຍໂຄສະນາສິນຄ້າ ແລະ ການບໍລິການ ສະເພາະ ແຂວງ ແລະ ນະຄອນຫຼວງ ຂອງຕົນເທົ່ານັ້ນ.

**ມາດຕາ 47 ສິດ ແລະ ໜ້າທີ່ຂອງຫ້ອງການຖະແຫຼງຂ່າວ, ວັດທະນະທຳແລະທ່ອງທ່ຽວເມືອງ, ເທດສະບານ, ນະຄອນ**

ການຂໍອະນຸຍາດດຳເນີນທຸລະກິດກ່ຽວກັບປ້າຍໂຄສະນາ ທີ່ຂຶ້ນທະບຽນການຄ້າ ຂັ້ນເມືອງ, ເທດສະບານ, ນະຄອນ ໃຫ້ສະເໜີຕໍ່ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

ຫ້ອງການ ຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ ສາມາດອອກໃບອະນຸຍາດປ້າຍໂຄສະນາສິນຄ້າ ແລະ ການບໍລິການ ສະເພາະ ເມືອງ, ເທດສະບານ, ນະຄອນ ຂອງຕົນເທົ່ານັ້ນ.

**III. ການຈັດຕັ້ງປະຕິບັດ**

1. ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນອົງການປະສານງານກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດຕາມຈຸດປະສົງຄາດໝາຍ;
2. ຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຕ່ລະຂັ້ນ ແລະ ຫົວໜ່ວຍທຸລະກິດທີ່ດຳເນີນກິດຈະການກ່ຽວກັບປ້າຍ ໃຫ້ຈັດຕັ້ງ ແລະ ປະຕິບັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຄຳແນະນຳສະບັບນີ້;
3. ການຈັດຕັ້ງປະຕິບັດຕົວຈິງຖ້າຫາກມີຄວາມຫຍຸ້ງຍາກໃຫ້ລາຍງານ ແລະ ປະສານສົມທົບກັບ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເພື່ອຮ່ວມກັນຄົ້ນຄ້ວາ ຕາມຄວາມເໝາະສົມ;
4. ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ສອນສະຫວັນ ວິຍະເກດ